ຖະແຫຼງຂ່າວ

# ກອງເລຂາຄະນະກຳມາທິການແມ່ນ້ຳຂອງ ເລີ້ມຍ້າຍເຂົ້າໄປຢູ່ ຫ້ອງການທີ່ສອງ ໃນປະເທດກຳປູເຈຍ

*ນະຄອນຫຼວງພະນົມເປັນ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າພາບຮ່ວມໃຫ້ແກ່ ກອງເລຂາຄະນະກຳມາທິການແມ່ນ້ຳຂອງ ເລີ້ມຈາກເດືອນນີ້ເປັນຕົ້ນໄປ*

**ນະຄອນຫຼວງວຽງຈັນ, ສປປ ລາວ**

**ວັນທີ 7 ກໍລະກົດ 2010, ສຳລັບ ຖະແຫຼງຂ່າວທັນທີ**

ຄະນະກຳມາທິການແມ່ນ້ຳຂອງ (MRC) ໄດ້ເລີ້ມຂະບວນການແບ່ງຫ້ອງການກອງເລຂາຂອງຕົນ ໄປຢູ່ສະຖານທີ່ 2 ແຫ່ງ: 1 ແຫ່ງໃນນະຄອນຫຼວງພະນົມເປັນ, ປະເທດກຳປູເຈຍ ແລະ ອີກ 1 ແຫ່ງໃນນະຄອນຫຼວງວຽງຈັນ, ສປປ ລາວ ໂດຍສືບເນື່ອງຈາກ ຂໍ້ຕົກລົງ ລະຫວ່າງ 2 ປະເທດນີ້ ໃນປີກາຍນີ້ ວ່າດ້ວຍການເປັນເຈົ້າພາບຮ່ວມຢ່າງຖາວອນໃຫ້ແກ່ ກອງເລຂາຄະນະກຳມາທິການແມ່ນ້ຳຂອງ.

ກອງເລຂານີ້, ຊຶ່ງໃນປະຈຸບັນນີ້ ມີພະນັກງານຫຼາຍກວ່າ 150 ຄົນ ຈາກທັງສອງປະເທດ, ແມ່ນຮອດກຳນົດເວລາ ທີ່ຈະຕ້ອງຍົກຍ້າຍທັງໝົດ ໄປປະຈຳຢູ່ ນະຄອນຫຼວງພະນົມເປັນ ໃນປີ 2010 ຊຶ່ງມັນເປັນເນື້ອໃນສ່ວນໜຶ່ງຂອງຂໍ້ຕົກລົງໃນປີ 1996 ວ່າດ້ວຍການໝູນວຽນ ສະຖານທີ່ຕັ້ງກອງເລຂາ ທຸກໆ 5 ປີ.

ເຖິງຢ່າງໃດກໍ່ຕາມ, ໃນເດືອນພະຈິກ ປີ 2009 ພາຍຫຼັງທີ່ໄດ້ມີການເຈລະຈາກັນຍາວນານ, ບັນດາລັດຖະບານຂອງປະເທດສະມາຊິກ ທັງ 4 ປະເທດ ໄດ້ແກ່: ປະເທດກຳປູເຈຍ, ສປປ ລາວ, ປະເທດໄທ ແລະ ປະເທດຫວຽດນາມ ຈຶ່ງໄດ້ມີຂໍ້ຕົກລົງ ທີ່ຈະກະຈາຍ ການຈັດຕັ້ງຂອງຄະນະກຳມາທິການແມ່ນ້ຳຂອງ.

"ບັນດາປະເທດເລົ່ານັ້ນ ເຫັນດີວ່າ ການເຄື່ອນຍ້າຍໃນຕົວຈິງ ໃນທຸກໆ 5 ປີ ຕາມຂໍ້ຕົກລົງທີ່ໄດ້ເຮັດຜ່ານມາ ແມ່ນເປັນບັນຫາທ້າທາຍທາງດ້ານການຍົກຍ້າຍອັນໜຶ່ງ ສຳລັບ ກອງເລຂາ," ກ່າວໂດຍ ທ່ານ ເຈຣາມີ ເບີດ (Jeremy Bird), ຫົວໜ້າຄະນະກຳມາທິການແມ່ນ້ຳຂອງ. "ນອກຈາກລາຍຈ່າຍໃນການເຄື່ອນຍ້າຍແລ້ວ, ມັນຍັງລົບກວນແຜນວຽກງານປະຈຳວັນ ແລະ ຊັບພະຍາກອນມະນຸດນຳອີກ, ພ້ອມທັງກໍ່ໃຫ້ເກີດບັນຫາທ້າທາຍ ຕໍ່ກັບທິດທາງຍຸດທະສາດ ຂອງຄະນະກຳມາທິການແມ່ນ້ຳຂອງ."

ທ່ານ ເຈຣາມີ ເບີດ ໄດ້ກ່າວຕື່ມວ່າ "ການທົບທວນ ຂໍ້ຕົກລົງວ່າດ້ວຍການໝູນວຽນທຸກໆ 5 ປີ ຈະຊ່ວຍເພີ້ມພູນປະສິດທິຜົນ, ປະສິດທິພາບ ແລະ ຄວາມຍືນຍົງຂອງ ຄະນະກຳມາທິການແມ່ນ້ຳຂອງ, ແລະ ຈະຊ່ວຍໃຫ້ພວກເຮົາສາມາດສຸມໃສ່ ໂອກາດສຳຄັນໃນການພັດທະນາ ແລະ ບັນຫາທ້າທາຍທີ່ອ່າງນ້ຳຂອງ ກຳລັງປະເຊີນໜ້າຢູ່".

ມາຮອດເດືອນນີ້, ຫ້ອງການຖາວອນ 2 ແຫ່ງ ໄດ້ຖືກສ້າງຕັ້ງຂື້ນ; ຫ້ອງການໜຶ່ງ ແມ່ນຢູ່ນະຄອນຫຼວງວຽງຈັນ ແລະອີກຫ້ອງການໜຶ່ງ ແມ່ນຢູ່ໃນອາຄານເກົ່າ (ອາຄານເດີມ) ຂອງສູນຄຸ້ມຄອງ ແລະ ຫຼຸດຜ່ອນໄພນ້ຳຖ້ວມໃນຂົງເຂດພາກພື້ນທີ່ຂື້ນກັບ ຄະນະກຳມາທິການແມ່ນ້ຳຂອງ ໃນນະຄອນຫຼວງພະນົມເປັນ.

ຫ້ອງການຂອງຫົວໜ້າໃຫຍ່ (ທ່ານ ເຈຣາມີ ເບີດ) ແລະ ຫ້ອງການຂອງບັນດາຫົວໜ້າຂະແໜງບໍລິການທົ່ວໄປ, ພ້ອມທັງອີກ 2 ຂະແໜງ ຈະຍັງສືບຕໍ່ຢູ່ນະຄອນຫຼວງວຽງຈັນ, ໃນຂະນະທີ່ 2 ຂະແໜງການອື່ນ ພ້ອມທັງ ພະນັກງານຕາງໜ້າຂອງ ຂະແໜງບໍລິການທົ່ວໄປ ໄດ້ເລີ້ມເຄື່ອນຍ້າຍໄປ ນະຄອນຫຼວງພະນົມເປັນແລ້ວ. ຄະນະກຳມາທິການແມ່ນ້ຳຂອງກ່າວວ່າ ການຍົກຍ້າຍນີ້ ຈະສຳເລັດພາຍໃນທ້າຍປີນີ້.

ບັນດາແຜນງານ ທີ່ຈະຕ້ອງຍົກຍ້າຍໄປປະຈຳທີ່ ຫ້ອງການກອງເລຂາໃນນະຄອນຫຼວງພະນົມເປັນ ປະກອບດ້ວຍບັນດາແຜນງານທີ່ "ມີລັກສະນະສະເພາະປະເດັນໃດໜຶ່ງ," ເຊັ່ນວ່າ ແຜນງານກະສິກຳ ແລະ ຊົນລະປະທານ, ໂຄງການຄຸ້ມຄອງໄພແຫ້ງແລ້ງ, ແຜນງານການປະມົງ, ແຜນງານການສັນຈອນທາງນ້ຳ, ແລະ ແຜນງານການຄຸ້ມຄອງ ຂໍ້ມູນຂ່າວສານ ແລະ ຄວາມຮູ້, ຊຶ່ງຈະໄປເຂົ້າຮ່ວມກັບ ແຜນງານຄຸ້ມຄອງ ແລະ ຫຼຸດຜ່ອນໄພນ້ຳຖ້ວມ ທີ່ຕັ້ງຢູ່ໃນນະຄອນຫຼວງພະນົມເປັນຢູ່ແລ້ວ. ບັນດາແຜນງານທີ່ຍັງຄົງຄ້າງຢູ່ໃນ ນະຄອນຫຼວງວຽງຈັນ ປະກອບດ້ວຍ ບັນດາແຜນງານທີ່ພົວພັນກັບ ການວາງແຜນການໃນທົ່ວອ່າງແມ່ນ້ຳຂອງ ໃນໄລຍະຍາວ, ເຊັ່ນວ່າ ແຜນພັດທະນາອ່າງນ້ຳ, ໂຄງການຄຸ້ມຄອງ ແຫຼ່ງຊັບພະຍາກອນແມ່ນ້ຳຂອງແບບປະສົມປະສານ, ແຜນງານລິເລີ້ມ ກ່ຽວກັບ ພະລັງງານໄຟຟ້ານ້ຳຕົກແບບຍືນຍົງ, ແຜນງານປົກປ້ອງສະພາບແວດລ້ອມ ແລະ ແຜນງານລິເລີ້ມປັບຕົວເຂົ້າກັບການປ່ຽນແປງສະພາບອາກາດ.

ໃນປີ 1996, ຊຶ່ງແມ່ນໜຶ່ງປີ ພາຍຫຼັງການເຊັນສັນຍາ ຂໍ້ຕົກລົງແມ່ນ້ຳຂອງໃນປີ 1995 ວ່າດ້ວຍການສ້າງຕັ້ງ ຄະນະກຳມາທິການແມ່ນ້ຳຂອງ, ສະພາຂອງຄະນະກຳມາທິການແມ່ນ້ຳຂອງ ໄດ້ຕົກລົງເຫັນດີວ່າ ສະຖານທີ່ຕັ້ງກອງເລຂາຈະຕ້ອງໝູນວຽນກັນ ລະຫວ່າງ ນະຄອນຫຼວງພະນົມເປັນ ແລະ ນະຄອນຫຼວງວຽງຈັນ ທຸກໆ 5 ປີ. ນັບຈາກປີ 1998 ກອງເລຂານີ້ ໄດ້ຕັ້ງຢູ່ ນະຄອນຫຼວງພະນົມເປັນ ແລະ ຫຼັງຈາກນັ້ນກໍ່ໄດ້ຍ້າຍມາຕັ້ງຢູ່ ຫ້ອງການປະຈຸບັນ ໃນນະຄອນຫຼວງວຽງຈັນ ໃນປີ 2004.

*-ຈົບ-*

**ໝາຍເຫດສຳລັບບັນນາທິການ:**

ຂໍ້ຕົກລົງ ກ່ຽວກັບ ສະຖານທີ່ຕັ້ງ ອົງການສາກົນໃດໜຶ່ງ ຫຼື ອົງການທີ່ບໍ່ສັງກັດລັດ ອາດມີຜົນກະທົບທາງດ້ານການເມືອງ, ດັ່ງທີ່ເຫັນໄດ້ຈາກການໂຕ້ຖຽງກັນ ກ່ຽວກັບ ສະຖານທີ່ຕັ້ງຂອງ ສະພາເອີຣົບ, ຊຶ່ງສະພານີ້ ຈະຈັດກອງປະຊຸມເຕັມຄະນະ 12 ເທື່ອຕໍ່ປີ ໃນເມືອງສະຕຼັດສະບູກ (Strasbourg), ຈັດກອງປະຊຸມຄະນະກຳມະການ ແລະ ກອງປະຊຸມພິເສດ ໃນນະຄອນຫຼວງ ບຼັດເຊວ (Brussels) ແລະ ມີກອງເລຂາຢູ່ທີ່ປະເທດ ລຸກຊຳບວກ (Luxembourg).

ໃນປີ 1996, ທັງປະເທດກຳປູເຈຍ ແລະ ສປປ ລາວ ໄດ້ສະແດງເຈດຕະນາອັນໜັກແໜ້ນ ທີ່ຕ້ອງການເປັນເຈົ້າພາບ ໃຫ້ແກ່ ກອງເລຂາຄະນະກຳມາທິການແມ່ນ້ຳຂອງ ແລະ ສະນັ້ນ ຈຶ່ງໄດ້ມີການຕົກລົງເຫັນດີ ໃຫ້ໝູນວຽນກັນທຸກໆ 5 ປີ. ກອງເລຂານີ້ໄດ້ຍ້າຍອອກຈາກ ບາງກອກ ໄປຕັ້ງຢູ່ນະຄອນຫຼວງພະນົມເປັນ ໃນປີ 1998 ແລະ ຫຼັງຈາກນັ້ນ ກໍ່ໄດ້ຍ້າຍມາທີ່ ນະຄອນຫຼວງວຽງຈັນ ໃນປີ 2004.

ໃນປີ 2007, ສະພາຄະນະກຳມາທະການແມ່ນ້ຳຂອງ ໄດ້ທົບທວນ ຂໍ້ຕົກລົງວ່າດ້ວຍການຍົກຍ້າຍ ກອງເລຂາທຸກໆ 5 ປີ ແລະ ໄດ້ຕົກລົງເຫັນດີວ່າຈະຊອກຫາ ສະຖານທີ່ຖາວອນເພື່ອເປັນເຈົ້າພາບຮ່ວມ ເພື່ອຫຼຸດຜ່ອນງົບປະມານ ແລະ ການລົບກວນ ອັນເນື່ອງມາຈາກ ການໝູນວຽນທຸກໆ 5 ປີ.

ກອງເລຂາຄະນະກຳມາທິການແມ່ນ້ຳຂອງ ແມ່ນແຂນຂວາຂອງ ຄະນະກຳມາທິການແມ່ນ້ຳຂອງ ມີໜ້າທີ່ຮັບຜິດຊອບການຮ່ວມມື ໃນການພັດທະນາ ແລະ ຄຸ້ມຄອງອ່າງແມ່ນ້ຳຂອງແບບຍືນຍົງ. ໃນການຮັບມືກັບບັນຫາທ້າທາຍນີ້, ຄະນະກຳມາທິການແມ່ນ້ຳຂອງ ຄຸ້ມຄອງໝົດທຸກຂະແໜງການ ຊຶ່ງລວມມີ ການຄຸ້ມຄອງການປະມົງແບບຍືນຍົງ, ການຊອກຫາກາລະໂອກາດທາງດ້ານການພັດທະນາກະສິກຳ, ການຮັກສາການເດີນເຮືອ ແບບອິດສະລະພາບ, ການຄຸ້ມຄອງນ້ຳຖ້ວມ ແລະ ການປົກປັກຮັກສາລະບົບນິເວດວິທະຍາທີ່ສຳຄັນ. ເພີ່ມເຕີມຈາກສິ່ງຕ່າງໆທີ່ໄດ້ກ່າວມາ ແມ່ນຜົນກະທົບຮ້າຍແຮງ ໃນອະນາຄົດຂອງໄພນ້ຳຖ້ວມ, ໄພແຫ້ງແລ້ງທີ່ແກ່ຍາວ ແລະ ການຍົ່ງຂຶ້ນຂອງລະດັບນ້ຳທະເລ ທີ່ກ່ຽວພັນເຖິງການປ່ຽນແປງຂອງອາກາດ. ໃນການໃຫ້ຄຳແນະນຳຂອງຕົນນັ້ນ, ຄະນະກຳມາທິການແມ່ນ້ຳຂອງ ມີຈຸດປະສົງທີ່ອຳນວຍຄວາມສະດວກ ໃຫ້ມີການປຶກສາຫາລື ຢ່າງກວ້າງຂວາງ ລະຫວ່າງລັດຖະບານ, ພາກເອກກະຊົນ ແລະ ອົງກອນພົນລະເຮືອນ ກ່ຽວກັບບັນດາສິ່ງທ້າທາຍຕ່າງໆເຫລົ່ານີ້.

**ຖ້າຕ້ອງການ ຂໍ້ມູນເພີ່ມເຕີມ ເຊີນຕິດຕໍ່: ທ່ານ ດາມຽນ ຄີນ (Damian Kean), ທີ່ປຶກສາດ້ານປະຊາສຳພັນ, ໂທ: +856 20 7752 7500 (ຢູ່ ສປປ ລາວ), ອີເມວ: damian@mrcmekong.org, ເວບໄຊ: www.mrcmekong.org**